# ວັກຊິນ ໄຂ້ເລືອດດຳ

## ນິຍາມ:

ວັກຊິນຊະນິດນ້ ປຸງແຕ່ງມາຈາກເຊື້ອ BACILLU SANTH — RACI ທີ່ເຊົ້າປ້ ປະສົມໃສ່ກັບປະລິມານ 50 % ກລີ ເຊີຣິນ ນ້ຳເກືອເປັນວັກຊິນເຊື້ອເປັນຊະນິດນ້ຳ.




## ລັກສະນະອາການ

ເປັນພະຍາດທີ່ມັກເກີດກັບງົວ ຄວາຍ, ແກະ ແບ້, ໝູ ແລະ ສັດອື່ນໆ. ມັກຕາຍກະທັນຫັນ, ໄຂ້ຂຶ້ນສູງພິເສດ , ຫາຍໃຈຫອບ, ຕາແດງ, ຢືນຊຸ່ນປິ່ນໄປມາຈົນລົ້ມຕາຍ. ໃນປະເພດທີ່ແກ່ຍາວແດ່ນັ້ນ ຈະສັງເກດເຫັນອາການໃຄ່ຕາມລຳຄໍ ຕາມໜ້າເອິກ ຄຳເບິ່ງຮູ້ສຶກຮ້ອນ, ອາຈົມມີສີດຳແກມເລືອດ ຍຽວແກມເລືອດ ເວລາສັດຕາຍຈະມີເລືອດອອກມາຕາມຮູດັງ, ປາກ, ຂີ້ນ , ຮູທະວານ.

## ຂໍ້ແນະນຳ

ໃຊ້ປ້ອງກັນພະຍາດໄຂ້ເລືອດດຳ ງົວ, ຄວາຍ, ແກະ, ແບ້ ,ໝູ

- ♦ ຫ້າມສັກສັກຖືພາ ແລະ ສັດທີ່ອ່ອນເພຍ
- ♦ ເວລາໃຊ້ຄວນລະວັງບໍ່ໃຫ້ນ້ຳຢາເຮ່ຽຊະຊາຍ ຫຼື ຖືກບາດແຜຂອງຜູ້ທີ່ນຳໃຊ້ ຫຼັງຈາກໃຊ້ແລ້ວຕ້ອງຕົ້ມເຂັມ. ແລະ ກ້ອງສິດຢາໃຫ້ຟົດ 1 ຊົ່ວໂມງ.

## ວິທີໃຊ້

- ♦ ງົວ, ຄວາຍອາຍຸ 6 ເດືອນຂຶ້ນໄປ ສັກ 1 ມລ. ສັກຫຼືບໜັງ
- ♦ ແກະ, ແບ້, ໝູ ອາຍຸ 3 ເດືອນຂຶ້ນໄປ ສັກ 1 ມລ. ສັກຫຼືບໜັງ ຫຼັງຈາກສັກຢາຈະມີອາການໃຄ່ເລັກນ້ອຍ ຕາມບໍລິເວນບ່ອນສັກຢາ ແລະ ອຸນນະພູມກໍ່ຈະຂຶ້ນເລັກນ້ອຍ ພາຍໃນໄລຍະ 2 — 3 ມື້.



ຮູບ: ການສັກຫຼືບໜັງ

## ໄລຍະຄຸ້ມກັນ

ສັດຈະມີຄວາມຄຸ້ມກັນ ຫຼັງຈາກສັກຢາໄດ້ 2 ອາທິດ ແລະ ຈະຄຸ້ມກັນຕໍ່ພະຍາດໄຂ້ເລືອດດຳໄດ້ 1 ປີ.

## ການເກັບຮັກສາ

ຮັກສາໃນອຸນນະພູມ 4 ອົງສາ ກຸ້ມໄດ້ 1ປີ. ເວລາຂົນຍ້າຍວັກຊິນຄວນຮັກສາໃຫ້ຢູ່ໃນຄວາມເຢັນ ແລະ ບໍ່ໃຫ້ຖືກແສງແດດ.

## ແກ້ວບັນຈຸ

ແກ້ວໜຶ່ງບັນຈຸ 10 ມລ / 10 ເຂັມ.

**ຕາຕະລາງ : ການນຳໃຊ້ຢາວັກຊິນ ໄຂ້ເລືອດດຳ**

| ຊະນິດຢາວັກຊິນ | ອາຍຸສັດຕ້ອງໃຊ້ | ວິທີໃຊ້ | ໄລຍະຄຸ້ມກັນ |
|---|---|---|---|
| ♦ ຢາວັກຊິນ ໄຂ້ເລືອດດຳ | ♦ ໃຊ້ກັບງົວ, ຄວາຍ (ອາຍຸ 6 ເດືອນ ຂຶ້ນໄປ). ♦ ແກະ, ແບ້ ໝູ (ອາຍຸ 3 ເດືອນ ຂຶ້ນໄປ | ♦ ງົວ, ຄວາຍ ສັກ 1 ມລ. (ສັກຫຼືບໜັງ) ♦ ແກະ, ແບ້ ສັກ 1 ມລ. (ສັກ ຫຼືບໜັງ) | 1 ປີ |

Laos Extension for Agriculture Project
P.O. Box 9159
Vientiane, Lao P.D.R.

ກອງສົ່ງເສີມກະສິກຳ ແລະ ປ່າໄມ້ ແຫ່ງຊາດ
ພະແນກສົ່ງເສີມ ແລະ ຄຸ້ມຄອງໂຄງການ

# ການນຳໃຊ້ຢາ
# ວັກຊິນໄຂ້ເລືອດດຳ



ຄັດຈາກ: ປື້ມຄູ່ມືການນຳໃຊ້ວັກຊິນສຳລັບສັດ (1997)

ຮຽບຮຽງໂດຍ :

ໜ່ວຍງານຝຶກອົບຮົມສົ່ງເສີມ ຂັ້ນສູນກາງ (CETDU)

ສະໜັບສະໜູນໂດຍ :

ໂຄງການ ສົ່ງເສີມ ກະສິກຳ (LEAP)